


# ໂຄງການ ສົ່ງເສີມການຄຸ້ມຄອງການລົງທຶນທາງດ້ານທີ່ດິນ ທີ່ມີຄວາມຮັບຜິດຊອບ ໃນ ສປປ ລາວ (ໂຄງການ RGIL)




## ສະພາບການທົ່ວໄປ

ສປປ ລາວ ມີແຜນຈະຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາໃນປີ 2024. ເພື່ອກະຕຸ້ນການເຕີບໂຕທາງດ້ານເສດຖະກິດ, ລັດຖະບານລາວໄດ້ເລັ່ງໃສ່ເສດຖະກິດສົ່ງອອກທີ່ອີງໃສ່ຊັບພະຍາກອນທຳມະຊາດ, ເຊັ່ນ: ໂຄງການບໍ່ແຮ່ຂະໜາດໃຫຍ່, ການກໍ່ສ້າງເຂື່ອນໄຟຟ້າພະລັງນໍ້າ ແລະ ການຂະຫຍາຍການປູກພືດກະສິກຳ. ຈຸດສຸມຫຼັກແມ່ນສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດ ເຂົ້າໃນຂະແໜງກະສິກຳ ແລະ ປ່າໄມ້, ເພື່ອສົ່ງເສີມການຖ່າຍທອດທາງດ້ານເຕັກໂນໂລຢີສຳລັບຂະແໜງກະສິກຳທີ່ມີການຂະຫຍາຍຕົວຢ່າງກວ້າງຂວາງໃນປັດຈຸບັນ, ຊຶ່ງເກີດມີການຈ້າງງານ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນທີ່ອາໄສຢູ່ເຂດຊົນນະບົດ.

ເຖິງຢ່າງໃດກໍ່ຕາມ, ໂຄງການລົງທຶນທາງດ້ານກະສິກຳ ແລະ ປ່າໄມ້ ແມ່ນກຳລັງສ້າງຄວາມກົດດັນຫຼາຍຂຶ້ນໃນການນຳໃຊ້ທີ່ດິນຊຶ່ງເປັນຊັບພະຍາກອນທຳມະຊາດ. ເນື່ອງຈາກຍັງຂາດມາດຕະການປ້ອງກັນ, ຄວາມໂປ່ງໃສ ແລະ ກົນໄກການປ້ອງກັນ ແລະ ການແກ້ໄຂຂໍ້ຂັດແຍ່ງທີ່ເໝາະສົມ ແລະ ຄົບຖ້ວນ, ການລົງທຶນດັ່ງກ່າວມັກຈະກໍ່ໃຫ້ເກີດຂໍ້ຂັດແຍ່ງ, ການເວນຄືນສິດນຳໃຊ້ທີ່ດິນ ແລະ ການຍ້າຍຖິ່ນຖານທາງເສດຖະກິດແບບບັງຄັບ ຊຶ່ງອາດກໍ່ໃຫ້ເກີດເປັນຜົນກະທົບ ດ້ານຄວາມທຸກຍາກ ແລະ ການຂາດສານອາຫານ. ຜົນກະທົບທາງລົບເຫລົ່ານີ້ຍິ່ງມີຄວາມຮຸນແຮງຂຶ້ນ ຍ້ອນຍັງຂາດການຮັບຮູ້ສິດຄອບຄອງນຳໃຊ້ທີ່ດິນ ຫຼື ການຮັບຮູ້ດັ່ງກ່າວຍັງບໍ່ຈະແຈ້ງ ແລະ ຄວາມໝັ້ນຄົງທາງດ້ານການຄອບຄອງນຳໃຊ້ທີ່ດິນໂດຍທົ່ວໄປທີ່ຍັງຕໍ່າ ຢູ່ ສປປ ລາວ, ຊຶ່ງມີພຽງປະມານ 1 ສ່ວນ 3 ຂອງການຄາດຄະເນຕອນດິນທັງໝົດໃນທົ່ວປະເທດເທົ່ານັ້ນ ທີ່ໄດ້ຮັບການຂຶ້ນທະບຽນອອກໃບຕາດິນ. ດ້ວຍເຫດນັ້ນ, ປະຊາຊົນທີ່ອາໄສໃນເຂດຊົນນະບົດ, ໂດຍສະເພາະແມ່ນແມ່ຍິງ ແລະ ກຸ່ມທີ່ດ້ອຍໂອກາດ ສ່ວນຫຼາຍແມ່ນຂາດການເຂົ້າເຖິງການນຳໃຊ້ທີ່ດິນ ຫຼື ໄດ້ຮັບຜົນກະທົບທາງລົບຈາກໂຄງການລົງທຶນ.

| | |
|---|---|
| **ຊື່ໂຄງການ** | ໂຄງການ ສົ່ງເສີມການຄຸ້ມຄອງການລົງທຶນທາງດ້ານທີ່ດິນ ທີ່ມີຄວາມຮັບຜິດຊອບ (ໂຄງການ RGIL) |
| **ສະໜັບສະໜູນ ແລະ ໃຫ້ທຶນຮ່ວມໂດຍ** | ກະຊວງຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາຂອງລັດຖະບານເຢຍລະມັນ (BMZ), ສະຫະພາບເອີຣົບ (EU) |
| **ຈັດຕັ້ງປະຕິບັດໂດຍ** | ຈີໄອແຊັດ (GIZ) |
| **ຄູ່ຮ່ວມງານ** | ກະຊວງແຜນການ ແລະ ການລົງທຶນ |
| **ແຂວງເປົ້າໝາຍ** | ແຂວງ ບໍລິຄຳໄຊ, ວຽງຈັນ, ຫຼວງພະບາງ ແລະ ໄຊຍະບູລີ |
| **ກຸ່ມເປົ້າໝາຍ** | ພະນັກງານພາກລັດ (ຂັ້ນສູນກາງ, ແຂວງ ແລະ ເມືອງ), ນັກລົງທຶນທາງດ້ານກະສິກຳ ແລະ ປ່າໄມ້ (ພາຍໃນ ແລະ ຕ່າງປະເທດ), ຜູ້ນຳໃຊ້ທີ່ດິນຂັ້ນທ້ອງຖິ່ນ (ໂດຍສະເພາະແມ່ນຊາວກະສິກອນຂະໜາດນ້ອຍ, ກຸ່ມດ້ອຍໂອກາດ ແລະ ແມ່ຍິງ) |
| **ໄລຍະເວລາ** | ພະຈິກ 2019 – ຕຸລາ 2023 |

Implemented by
Deutsche Gesellschaft für Internationale Zusammenarbeit (GIZ) GmbH



## ຈຸດປະສົງ

ໂຄງການ RGIL ເປັນສ່ວນໜຶ່ງຂອງ ໂຄງການເສີມສ້າງຄວາມໝັ້ນຄົງໃນການຄອບຄອງນຳໃຊ້ທີ່ດິນ (ELTeS) ທີ່ສະໜັບສະໜູນສົ່ງເສີມຄຸນນະພາບການລົງທຶນ ເພື່ອຮັບປະກັນໃຫ້ການລົງທຶນທີ່ມີການນຳໃຊ້ທີ່ດິນ ໂດຍສະເພາະແມ່ນດ້ານກະສິກຳ ແລະ ປ່າໄມ້ ໄດ້ຮັບໝາກຜົນ, ສາມາດປະກອບສ່ວນເຂົ້າໃນການຄຸ້ມຄອງທີ່ດິນແບບຍືນຍົງ ເຄົາລົບສິດ ແລະ ຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນ.

## ຜົນໄດ້ຮັບ

ເພື່ອບັນລຸຈຸດປະສົງດັ່ງກ່າວ, ໂຄງການແນໃສ່ການເສີມສ້າງຂີດຄວາມສາມາດໃຫ້ພາກສ່ວນຕ່າງໆ ດັ່ງນີ້:

- **ພາກລັດ:** ເພື່ອຄຸ້ມຄອງ ແລະ ຊີ້ນຳ ການລົງທຶນທາງດ້ານທີ່ດິນໃຫ້ສອດຄ່ອງກັບນິຕິກຳທີ່ໄດ້ກຳນົດໄວ້ ແລະ ຕາມຫຼັກການທີ່ໄດ້ຮັບການຍອມຮັບ ເຊັ່ນ: ບົດແນະນຳຕາມຄວາມສະໝັກໃຈກ່ຽວກັບ ການບໍລິຫານສິດຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ (VGGT) ແລະ ຫຼັກການກ່ຽວກັບການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ (RAI);
- **ພາກສ່ວນນັກລົງທຶນພາຍໃນ ແລະ ຕ່າງປະເທດ:** ເພື່ອປະຕິບັດຕາມຫຼັກການທີ່ໄດ້ຮັບຮອງຈາກສາກົນ ໃນການລົງທຶນທີ່ມີຄວາມຮັບຜິດຊອບທາງດ້ານທີ່ດິນ;
- **ພາກສ່ວນຜູ້ນຳໃຊ້ທີ່ດິນຢູ່ທ້ອງຖິ່ນ:** ໂດຍສະເພາະແມ່ນຊາວກະສິກອນຂະໜາດນ້ອຍ, ກຸ່ມດ້ອຍໂອກາດ ແລະ ແມ່ຍິງ ເພື່ອສະໜັບສະໜູນສິດອັນຊອບທຳຂອງເຈົ້າຕໍ່ກັບທີ່ດິນ ແລະ ຄວາມຕ້ອງການຂອງເຂົາເຈົ້າ ໃນຂະບວນການລົງທຶນທາງດ້ານທີ່ດິນ.

## ກິດຈະກຳ ແລະ ເຄື່ອງມື

**ການສະໜັບສະໜູນລະດັບນະໂຍບາຍ:** ໂດຍຜ່ານການວິເຄາະກ່ຽວກັບກອບລະບຽບກົດໝາຍຂອງປະເທດ ສຳລັບການລົງທຶນທາງດ້ານທີ່ດິນ ແລະ ຂໍ້ບັງຄັບມາດຕະຖານຂັ້ນຕໍ່າ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ພ້ອມທັງສ້າງຄຳແນະນຳເພື່ອການປັບປຸງເພື່ອເປັນຂໍ້ມູນສຳລັບເວທີສົນທະນາທາງດ້ານນະໂຍບາຍ ໃນລະດັບຊາດ.

**ການປະເມີນຄວາມຕ້ອງການໃນການພັດທະນາຂີດຄວາມສາມາດ** ຂອງພາກລັດ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ນັກລົງທຶນ ແລະ ຊຸມຊົນ ກ່ຽວກັບການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ ແລະ **ການພັດທະນາມາດຕະການສ້າງຂີດຄວາມສາມາດທີ່ເໝາະສົມ** ພ້ອມທັງອຸປະກອນການຝຶກອົບຮົມ ແລະ ປຶ້ມຄູ່ມື.

**ການສ້າງຄວາມເຂັ້ມແຂງທາງກົດໝາຍ ແລະ ການປູກຈິດສຳນຶກ ແກ່ຊຸມຊົນ** ກ່ຽວກັບສິດນຳໃຊ້ທີ່ດິນ, ກົນໄກການຮ້ອງທຸກ, ການເຮັດສັນຍາທີ່ເປັນທຳ ແລະ ສິດໃນການປຶກສາຫາລືແບບມີສ່ວນຮ່ວມ.

**ກອງປະຊຸມພົບປະນັກລົງທຶນ** ສຳລັບນັກລົງທຶນ, ຊຸມຊົນ ແລະ ພາກລັດ ກ່ຽວກັບໂຄງການລົງທຶນໃດໜຶ່ງໂດຍສະເພາະ, ຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບໂຄງການ ແລະ ມາດຕະການໄກ່ເກ່ຍ.

**ກອງປະຊຸມພົບປະຫຼາຍພາກສ່ວນ** ລະຫວ່າງພາກລັດ, ນັກລົງທຶນ ແລະ ຕາງໜ້າປະຊາຊົນ ກ່ຽວກັບປະເດັນການລົງທຶນ, ກົດລະບຽບ ແລະ ລະບຽບການໃໝ່ ແລະ ຜົນໄດ້ຮັບຈາກການຕິດຕາມປະເມີນໂຄງການການລົງທຶນ.

**ການຕິດຕາມປະເມີນໂຄງການການລົງທຶນ** (IPM) ໂດຍນຳໃຊ້ລະບົບດີຈິຕອນເຂົ້າໃນການເກັບກຳຂໍ້ມູນ ແລະ ການຕິດຕາມໂຄງການລົງທຶນ ເຊິ່ງເຮັດໃຫ້ສາມາດສະແດງຜົນໄດ້ຮັບກ່ຽວກັບການປະຕິບັດງານຂອງໂຄງການ ເປັນຕົ້ນກໍ່ແມ່ນ ທາງດ້ານທີ່ດິນ, ສິ່ງແວດລ້ອມ ແລະ ແຮງງານ.

## ຜົນໄດ້ຮັບທີ່ສຳຄັນ

**95 ໂຄງການລົງທຶນທາງດ້ານທີ່ດິນພາກເອກະຊົນ** ປະຕິບັດຕາມການນຳໃຊ້ທີ່ດິນທີ່ໄດ້ຕົກລົງກັນໄວ້.

**55% ຂອງຜູ້ນຳໃຊ້ທີ່ດິນໃນທ້ອງຖິ່ນ** ທີ່ໄດ້ຮັບຜົນກະທົບຈາກການລົງທຶນທາງດ້ານທີ່ດິນຂອງພາກເອກະຊົນມີຄວາມເພິ່ງພໍໃຈຕໍ່ກັບການລົງທຶນ.

**50% ຂອງຂໍ້ຂັດແຍ່ງ** ທີ່ເກີດຂຶ້ນໃນຊຸມຊົນເປົ້າໝາຍໄດ້ຮັບການແກ້ໄຂ ໂດຍການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.

**85 ໂຄງການລົງທຶນພາກເອກະຊົນ** ໃນພື້ນທີ່ເປົ້າໝາຍໄດ້ຮັບການຊີ້ນຳ ໂດຍອີງໃສ່ບົດແນະນຳພາຍໃນປະເທດ ແລະ ສາກົນ.


**Published by** Deutsche Gesellschaft für Internationale Zusammenarbeit (GIZ) GmbH

**Registered offices** Bonn and Eschborn, Germany

**Project** Global Program on Responsible Land Policy
Vientiane, Lao P.D.R.
E giz-laos@giz.de
I www.giz.de/laos

**Contact** Eva Prediger
Officer responsible for implementation (DV)
eva.prediger@giz.de

**Design/Layout** GIZ

**Photo credits** GIZ/Khankeo Oupravanh and Bart Verweij



**URL links:** Responsibility for the content of external websites linked in this publication always lies with their respective publishers. GIZ expressly dissociates itself from such content.



RGIL and ELTeS are implemented within the Global Program on Responsible Land Policy as part of the German Special Initiative “One World – No Hunger” of the German Federal Ministry for Economic Cooperation and Development (BMZ). RGIL is co-funded by the European Union.

GIZ is responsible for the content of this publication

As of January 2023, Vientiane